ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ລັດວິສາຫະກິດໄຟຟ້າລາວ

ເລກທີ: 0020 /ຟຟລ.ຫຟຟລ.
ນະຄອນຫຼວງວຽງຈັນ, ວັນທີ: 02 JAN 2026

## ໜັງສືເຊີນເຂົ້າຮ່ວມປະມູນ

1. ລັດວິສາຫະກິດໄຟຟ້າລາວ ໄດ້ນຳໃຊ້ຮ່ວງເງິນແຜນງົບປະມານ ແລະ ການລົງທຶນປີ 2025 ເພື່ອເຊີນບັນດາ ບໍລິສັດທີ່ສົນໃຈ ເຂົ້າຮ່ວມປະມູນການຈັດຊື້ໂຕະ ແລະ ຕັ່ງໃໝ່ເພື່ອປະກອບເຂົ້າໃນຫ້ອງການປະຊຸມໃຫຍ່ ຊັ້ນ 1 ເພື່ອທົດແທນໜ່ວຍເກົ່າທີ່ເປ່ເພພາຍໃນສຳນັກງານໃຫຍ່, ລັດວິສາຫະກິດໄຟຟ້າລາວ ແລະ ໄລຍະການຈັດສົ່ງສິນຄ້າໃຫ້ສຳເລັດພາຍໃນເວລາ 30 ວັນ.
2. ການປະມູນນີ້ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ສະບັບເລກທີ: 30/ສພຊ, ລົງວັນທີ: 2 ພະຈິກ 2017. ແລະ ເອກະສານ ຄຳແນະນຳການໃຊ້ກົດໝາຍ ສະບັບ ເລກທີ: 0477/ກງ, ລົງວັນທີ: 13 ກຸມພາ 2019, ຄຳແນະນຳເພີ່ມເຕີມສຳລັບ ມາດຕາ 23 ແລະ ມາດຕາ 31 ຂອງຄຳແນະນຳການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ: 1995/ກງ, ລົງວັນທີ: 24 ມິຖຸນາ 2019.
3. ຜູ້ປະມູນຕ້ອງມີສຳເນົາເອກະສານໃບອະນຸຍາດດຳເນີນທຸລະກິດ ແລະ ໃບມອບພັນທະອາກອນປີ 2023 ຫຼື 2024 ທີ່ຖືກຕ້ອງຕາມກົດໝາຍ.
4. ບໍລິສັດໃດທີ່ມີເງື່ອນໄຂເຕັກນິກເໝາະສົມ ແລະ ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນ ແລະ ເຮັດໜັງສືເຈດຈຳນົງຊື້ເອກະສານປະມູນໄດ້ທີ່ລັດວິສາຫະກິດໄຟຟ້າລາວ (ສຳນັກງານໃຫຍ່), ຖະໜົນມິດຕະພາບລາວ-ໄທ, ຕູ້ ປ.ນ 309, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ. ໂທ: (856-21) 316133-1117, ພະແນກຈັດຊື້-ຈັດຈ້າງ, ຫ້ອງການໄຟຟ້າລາວ ໃນໂມງລັດຖະການ, ເລີ່ມແຕ່ວັນທີ: 20/1/2026 ໄປຈົນເຖິງ 9/2/2026 ໃນລາຄາ 200,000 ກີບ/ຊອງ ຈຳນວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ (ວິທີການຊຳລະຕ້ອງຈ່າຍເປັນເງິນສົດ).
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09 : 30 ໂມງ ຂອງວັນທີ: 9/2/2026 ທີ່ຫ້ອງປະຊຸມຊັ້ນ 8 ຫ້ອງ 801, ສຳນັກງານໃຫຍ່. ຊອງປະມູນໃດສົ່ງຊ້າກວ່າເວລາທີ່ໄດ້ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 09:30 ໂມງ ຂອງວັນດຽວກັນ ໂດຍຊ້ອງໜ້າຄະນະກຳມະການຈັດຊື້ ຟຟລ, ຕາງໜ້າກະຊວງການເງິນ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນ.
6. ຜູ້ປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນຊອງປະມູນໃນມູນຄ່າ 2% ຂອງລາຄາທີ່ສະເໜີຮ່ວມການປະມູນ (ເປັນໜັງສືຄ້ຳປະກັນຈາກທະນາຄານ ຫຼື ແຊັກວີຊ່າ ເທົ່ານັ້ນ ທີ່ນຳໃຊ້ເຖິງ ວັນທີ: 9/5/2026).

ຜູ້ອຳນວຍການໃຫຍ່

ບໍລິສັດລັດ ວິສາຫະກິດໄຟຟ້າລາວ ELECTRICITE DU LAOS

ປອ. ອາຄົມເດດ ວົງໄຊ
ຜູ້ອຳນວຍການໃຫຍ່

ຖະໜົນມິດຕະພາບລາວ-ໄທ, ຕູ້ ປ.ນ 309, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ ສ ປ ປ ລາວ.
ໂທ: (856-21) 316094-1614 ແຟັກ: (856-21) 316118; 263794; ອີເມລ: edlmdo@edl.com.la; ເວັບໄຊ: www.edl.com.la